**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ...55/ສພຂ.ຊຍ

ໄຊຍະບູລີ, ວັນທີ..28.ສິງຫາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ

## ວ່າດ້ວຍການຮັບຮອງເອົາຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 77 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 123 ແລະ ມາດຕາ 124;
- ອີງຕາມ ບົດລາຍງານ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບ ເລກທີ 4056/ກປຂ.ຊຍ, ລົງວັນທີ 10 ສິງຫາ 2023 ແລະ ບົດລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 2385/ພຊສ.ຊຍ ລົງວັນທີ 16 ສິງຫາ 2023.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ການປະເມີນນິຕິກຳໃຕ້ກົດໝາຍ 4 ສະບັບ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດ II ວັນທີ 25 ສິງຫາ 2023.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ**

ກອງປະຊຸມເຫັນດີ ຕໍ່ຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ດັ່ງນີ້:

- ຂໍ້ຕົກລົງ ວ່າດ້ວຍການສົ່ງເສີມກະສິກຳຍືນຍົງ;
- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາຊົນລະປະທານ;
- ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາຂັ້ນບ້ານ;
- ຂໍ້ຕົກລົງ ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ.

ເຊິ່ງມີຄວາມຈຳເປັນ ເພື່ອເປັນເຄື່ອງມືສຳຄັນໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ອົງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ.

ຄຽງຄູ່ກັນນັ້ນ ເຫັນວ່າ: ການໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍ 4 ສະບັບ ຍັງບໍ່ທັນກວ້າງຂວາງ

ເລິກເຊິ່ງ ແລະ ທົ່ວເຖິງທຸກເປົ້າໝາຍໃນສັງຄົມ, ກົນໄກປະສານງານ, ການລາຍງານຍັງບໍ່ທັນຄ່ອງຕົວ, ຂາດການຕິດຕາມກວດກາຊຸກຍູ້ ຂອງການຈັດຕັ້ງປະຕິບັດ ຍັງບໍ່ເປັນເອກກະພາບກັນ.

**ມາດຕາ 2 ຮັບຮອງເອົາທິດທາງ ແລະ ວິທີການແກ້ໄຂ**

ກອງປະຊຸມເຫັນດີ ຕໍ່ທິດທາງ ແລະ ວິທີການແກ້ໄຂຜົນຂອງການປະເມີນການຈັດຕັ້ງປະຕິບັດນິຕິກຳ ໃຕ້ກົດໝາຍ 4 ສະບັບ ທີ່ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ.

ກອງປະຊຸມຄັ້ງນີ້ ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ພາກສວນທີ່ກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດ ດັ່ງນີ້:

1. ເພີ່ມທະວີການໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍ 4 ສະບັບ ດັ່ງກ່າວໃຫ້ກວ້າງຂວາງ, ເລິກເຊິ່ງ ທົ່ວເຖິງ ແລະ ແທດເໝາະກັບແຕ່ລະປະເພດເປົ້າໝາຍ;
2. ຮີບຮ້ອນຄົ້ນຄ້ວາປັບປຸງບັນດາເນື້ອໃນບາງມາດຕາຂອງນິຕິກຳ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດໂດຍໄວ ເພື່ອຮັບປະກັນໃຫ້ຖືກຕ້ອງ, ສອດຄ່ອງ ແລະ ມີຄວາມເປັນເອກະພາບກັນ;
3. ທົບທວນຄືນມາດຕາໃດ ທີ່ເຫັນວ່າຍັງເປັນຊ່ອງຫວ່າງ, ຂັດກັບນິຕິກຳອື່ນ ຕ້ອງຊອກວິທີການແກ້ໄຂ ໃຫ້ທັນກັບສະພາບການ.

**ມາດຕາ 3 ຮັບຮອງເອົາ ຂໍ້ສະເໜີ ແລະ ມາດຕະການ ແກ້ໄຂສະເພາະ**

ກອງປະຊຸມເຫັນດີຕໍ່ຂໍ້ສະເໜີ ກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດນິຕິກຳ ທີ່ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ລາຍງານຕໍ່ກອງປະຊຸມຄັ້ງນີ້.

ກອງປະຊຸມຕົກລົງມາດຕະການ ເພີ່ມເຕີມ ດັ່ງນີ້:

1. ຂໍ້ຕົກລົງ ວ່າດ້ວຍການສົ່ງເສີມກະສິກຳຍືນຍົງ: ຄົ້ນຄວ້າປັບປຸງເນື້ອໃນ ບາງມາດຕາ ຄື: ມາດຕາ 7 ຫາ ມາດຕາ 33;
2. ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ການພັດທະນາຊົນລະປະທານ: ຄົ້ນຄວ້າບາງມາດຕາ ເນື້ອໃນເຫັນວ່າບໍ່ທັນສອດຄ່ອງ ເປັນຕົ້ນ: ມາດຕາ 11 ຫາ ມາດຕາ 27;
3. ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາຂັ້ນບ້ານ: ໃຫ້ຈັດຕັ້ງກອງປະຊຸມສະຫຼຸບຖອດຖອນບົດຮຽນ, ວິເຄາະວິໄຈ ພ້ອມທັງຄົ້ນຄວ້າປັບປຸງເນື້ອໃນບາງມາດຕາໃຫ້ເລິກເຊິ່ງ ເປັນຕົ້ນ: ມາດຕາ 8 ຫາ ມາດຕາ 26;
4. ຂໍ້ຕົກລົງ ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ: ໃຫ້ສືບຕໍ່ໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍ ໃຫ້ກວ້າງຂວາງເລິກເຊິ່ງ, ຄົ້ນຄ້ວາປັບປຸງເນື້ອໃນບາງມາດຕາ ເປັນຕົ້ນ: ມາດຕາ 8 ແລະ ມາດຕາ 9.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ເປັນຮູບປະທຳ;
2. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາ ແລະ ຈັດຕັ້ງມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການອື່ນທີ່ກ່ຽວຂ້ອງ ເພີ່ມທະວີຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ